ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------==000==------

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ຄະນະກຳມະການດັດສົມທຸລະກິດນ້ຳປະປາ ເລກທີ: /ຄດນປ

ນະຄອນຫຼວງວຽງຈັນ, ວັນທີ

# ແຈ້ງການແນະນຳ

## ກ່ຽວກັບ

## ເປົ້າໝາຍ ການປະຕິບັດງານ ດ້ານການບໍລິການ ຂອງ ຜູ້ໃຫ້ການບໍລິການ ແລະການຕິດຕາມ ລະດັບການບໍລິການ ຂອງ ຜູ້ດັດສົມທຸລະກິດນ້ຳປະປາ

- ອີງຕາມດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບ ເລກທີ 191/ນຍ, ລົງວັນທີ 01 ກໍລະກົດ 2005 ວ່າດ້ວຍ ການດັດສົມທຸລະກິດ ນ້ຳປະປາ.
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີວ່າການ ກະຊວງ ໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 13265/ຍທຂ, ລົງວັນທີ 22/10/2009 ວ່າດ້ວຍການ ແຕ່ງຕັ້ງ ຄະນະ ກຳມະການດັດສົມ ທຸລະກິດ ນ້ຳປະປາ.
- ອີງຕາມກົດໝາຍວ່າດ້ວຍນ້ຳປະປາ ສະບັບເລກທີ 04/ສພຊ, ລົງວັນທີ 9 ກໍລະກົດ 2009.

**ປະທານ ຄະນະກຳມະການ ດັດສົມທຸລະກິດນ້ຳປະປາ ອອກບົດແນະນຳ**

ມາດຕາ 1: **ຈຸດປະສົງ:**

ເພື່ອ ຊຸກຍູ້ ສົ່ງເສີມໃຫ້ ບັນດາ ຫົວໜ່ວຍທຸລະກິດນ້ຳປະປາໄດ້ເຄື່ອນໄຫວສອດຄ່ອງ ກັບ ແນວທາງນະໂຍບາຍ ຂອງພັກ ແລະກົດໝາຍ ຂອງລັດ, ປະກອບສ່ວນ ຢ່າງຕັ້ງໜ້າ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ເພື່ອ ຊ່ວຍ“ຜູ້ດຳເນີນທຸລະກິດນ້ຳປະປາ ປັບປຸງການຄຸ້ມຄອງ ແລະການສະໜອງນ້ຳປະປາແນໃສ່ເຮັດໃຫ້ການບໍລິການ

ມີປະສິດພາບ ແລະ ໃຫ້ເປັນທີ່ເພິ່ງພໍໃຈຂອງລູກຄ້າ.

ແຈ້ງການແນະນຳສະບັບນີ້ໄດ້ກຳນົດຕົວຊີ້ບອກກ່ຽວກັບລະດັບແລະເປົ້າໝາຍ ຂອງ ການປະຕິບັດງານດ້ານການບໍລິການໃຫ້ແກ່ຜູ້ໃຫ້ການບໍລິການນ້ຳປະປາ ແລະແນະນຳວິທີການຕິດຕາມການຈັດຕັ້ງ ປະຕິບັດວຽກງານດັດສົມທຸລະກິດນ້ຳປະປາ ຂອງຫ້ອງການດັດສົມນ້ຳປະປາ.

## ມາດຕາ 2: **ເປົ້າໝາຍ ຂອງການປະຕິບັດງານດ້ານການບໍລິການ ແລະ ລະດັບການບໍລິການ**

ເປົ້າໝາຍ ການປະຕິບັດງານ ດ້ານການບໍລິການ ແລະ ລະດັບການບໍລິການ ສຳລັບ ຜູ້ໃຫ້ການບໍລິການໄດ້ລະບຸໄວ້ ຢູ່ໃນຕາຕະລາງ ເປົ້າໝາຍການປະຕິບັດງານດ້ານການບໍລິການ ແລະ ລະດັບການ ບໍລິການ" ທີ່ໄດ້ຄັດຕິດມາພ້ອມນີ້.

ຜູ້ໃຫ້ການບໍລິການນ້ຳປະປາຕ້ອງຮັບປະກັນໃນການບໍລິການນ້ຳປະປາບັນລຸໄດ້ຕາມ ລະດັບ ການບໍລິການດັ່ງທີ່ໄດ້ກຳນົດໄວ້ໃນຕາຕະລາງດັ່ງກ່າວ.

## ມາດຕາ3: **ກົນໄກການຕິດຕາມກວດກາລະດັບການບໍລິການ ແລະເປົ້າໝາຍ ຂອງການປະ ຕິບັດງານ ດ້ານການບໍລິການ**

ເພື່ອໃຫ້ບັນລຸໄດ້ຕາມເປົ້າໝາຍຂອງການປະຕິບັດງານດ້ານການບໍລິການຜູ້ໃຫ້ການ ບໍລິການນ້ຳປະປາ ຕ້ອງໄດ້ເອົາໃຈໃສ່ບາງເງື່ອນໄຂ ແລະ ເນື້ອໃນດັ່ງລຸ່ມນີ້:

1) ສ້າງກົນໄກຕິດຕາມການບໍລິການ ພາຍໃນໜຶ່ງປີຫຼັງຈາກທີ່ໄດ້ຮັບແຈ້ງການ ກ່ຽວກັບ ບົດແນະ ນຳດັ່ງກ່າວ ຈາກ ຄະນະກຳມະການດັດສົມທຸລະກິດນ້ຳປະປາ;
2) ສ້າງແຜນປະຕິບັດງານ ເພື່ອ ໃຫ້ບັນລຸໄດ້ຕາມເປົ້າໝາຍ ຂອງການປະຕິບັດງານດ້ານການບໍລິການ ແລະ ນຳສົ່ງ ແຜນດັ່ງກ່າວ ພ້ອມກັບບົດອະທິບາຍ ກ່ຽວກັບກົນໄກການຕິດຕາມກວດກາ ລະດັບການບໍລິ ການຂອງຕົນໃຫ້ຫ້ອງການດັດສົມນ້ຳປະປາ ເພື່ອ ປະກອບຄຳເຫັນ;
3) ຮັບປະກັນ ໃຫ້ການຕິດຕາມ ລະດັບການບໍລິການ ຂອງຕົນໄດ້ດຳເນີນໄປ ຢ່າງສະໝ່ຳສະເໝີ ໂດຍສອດຄ່ອງ ກັບ ການປະຕິບັດງານທີ່ມີປະສິດທິຜົນ;
4) ຮັກສາບົດບັນທຶກ ກ່ຽວກັບ ການອ່ານໝໍ້ແທກນ້ຳ, ການທົດລອງ ແລະ ບົດລາຍງານທັງໝົດ ແລະ ນຳສົ່ງບົດລາຍງານປະຈຳປີ ກ່ຽວກັບ ຜົນສຳເລັດ ຂອງເປົ້າ

ໝາຍການປະຕິບັດງານ ດ້ານ ການບໍລິການ ໃຫ້ແກ່ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນທີ່ກ່ຽວຂ້ອງ, ຫ້ອງການດັດສົມ ນ້ຳປະປາ ແລະ ພາກສ່ວນ ທີ່ກ່ຽວຂ້ອງອື່ນໆ.

5) ຮັບປະກັນໃຫ້ການສະໜອງນ້ຳປະປາບັນລຸໄດ້ຕາມລະດັບການບໍລິການ ທີ່ໄດ້ລະບຸໄວ້ຢູ່ໃນ ຕາຕະລາງລະດັບ ການບໍລິການ ແລະ ເປົ້າໝາຍ ການປະຕິບັດງານດ້ານການບໍລິການ;
6) ກວດສອບ ແລະ ກວດກາເຄື່ອງມື, ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ທີ່ນຳໃຊ້ ສຳລັບ ການຜະລິດ ແລະ ສະໜອງນ້ຳປະປາ ຢ່າງເປັນປົກກະຕິ;
7) ຈັດຫາຂໍ້ມູນຂ່າວສານ ຕາມຄວາມຕ້ອງການ ສຳລັບ ການດຳເນີນທຸລະກິດ ເພື່ອສ້າງຖານ ຂໍ້ມູນທີ່ຈຳເປັນ ສຳລັບ ການສະໜອງນ້ຳປະປາ ແລະ ສຳລັບ ການຕິດຕາມກວດກາ ລະດັບ ການບໍລິການ ທີ່ໄດ້ລະບຸໄວ້ ຢູ່ໃນບົດແນະນຳ ໃນແຕ່ລະໄລຍະ;
8) ປັບປຸງແກ້ໄຂ ໃຫ້ທັນເວລາເມື່ອເຫັນວ່າການສະໜອງນ້ຳປະປາ ບໍ່ສາມາດບັນລຸໄດ້ຕາມທີ່ໄດ້ກຳນົດຢູ່ໃນບົດແນະນຳ ກ່ຽວກັບ ເປົ້າໝາຍການປະຕິບັດງານດ້ານການບໍລິການ.

## ມາດຕາ 4: **ການເຫັນດີປະຕິບັດຕາມ**

ຜູ້ໃຫ້ການບໍລິການນ້ຳປະປາ ຕ້ອງເຫັນດີປະຕິບັດຕາມລະດັບການບໍລິການ ແລະ ເປົ້າໝາຍ ການປະຕິບັດງານ ດ້ານການບໍລິການຕາມເນື້ອໃນ ທີ່ໄດ້ລະບຸໄວ້ ໃນຕາຕະລາງ ລະດັບການບໍລິການ(Per formance Indicater) ແລະ ເປົ້າໝາຍການປະຕິບັດງານດ້ານ ການບໍລິການທຸກປະການ.

## ມາດຕາ 5: **ການຕິດຕາມ ກວດກາ ລະດັບການບໍລິການ**

ຜູ້ໃຫ້ການບໍລິການນ້ຳປະປາ ຕ້ອງສ້າງລະບົບ ການຕິດຕາມ ກວດກາລະດັບການບໍລິ ການ ພາຍໃນ ກຳນົດ ເວລາບໍ່ເກີນ 1 ປີ ຫລັງຈາກ ໄດ້ຮັບບົດແນະນຳສະບັບນີ້.

## ມາດຕາ 6: **ການເກັບຮັກສາ ປຶ້ມບັນທຶກຂໍ້ມູນຂ່າວສານ**

ຜູ້ໃຫ້ການບໍລິການນ້ຳປະປາຕ້ອງເກັບຮັກສາປຶ້ມບັນທຶກຂໍ້ມູນຂ່າວສານ ກ່ຽວກັບຕົວຊີ້ ບອກຢ່າງສະໝ່ຳສະເໝີ ໃນແຕ່ລະໄລຍະ.

## ມາດຕາ 7: **ການປະເມີນ ລະບົບນ້ຳປະປາ**

ຜູ້ໃຫ້ການບໍລິການນ້ຳປະປາຕ້ອງປະເມີນ ລະບົບນ້ຳປະປາ ຂອງຕົນຕາມຄວາມເປັນ ຈິງໃນສະ ພາບປະຈຸບັນ ແລະ ດຳເນີນການໃດໜຶ່ງ ທີ່ຈຳເປັນ ເພື່ອ ບັນລຸໄດ້ລະດັບການບໍລິການຕ່ຳສຸດ ແລະ ເປົ້າໝາຍການປະຕິບັດງານດ້ານການບໍລິການທີ່ໄດ້ກຳນົດໄວ້ຢູ່ໃນຕາຕະລາງລະດັບການບໍລິການ ແລະເປົ້າໝາຍການປະຕິບັດງານດ້ານການບໍລິການ ແລະຈະຕ້ອງສ້າງບັນຊີລາຍການສ່ວນປະກອບທັງໝົດທີ່ເຫັນວ່າມີຄວາມຈຳເປັນເປັນຕົ້ນ:

1). ສ້າງແຜນຜັງພື້ນທີ່ບໍລິການ ຂອງຕົນໃຫ້ລະອຽດໂດຍຜ່ານການເຫັນດີຈາກພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນທີ່ກ່ຽວຂ້ອງ;
2). ແຜນງານ ຂະຫຍາຍຕາຂ່າຍ ແລະ ປ່ຽນແທນທໍ່ນ້ຳປະປາ;
3). ແຜນງານ ຕິດຕາມກວດກາ ແລະ ສ້ອມແປງນ້ຳຮົ່ວໄຫຼ;
4). ແຜນງານ ການບົວລະບັດຮັກສາ ແລະ ໃຊ້ງານປະຕູນ້ຳ, ປະຕູລົມ, ກອົກດັບເພີງ ແລະ ໝໍ້ແທກນ້ຳລວມ;
5). ແຜນງານບູລະນະຮັກສາ, ການປັບປຸງຂັ້ນຕອນການດຳເນີນງານ ແລະ ການບົວລະບັດ ຮັກສາ ໂຮງງານ ຜະລິດນ້ຳປະປາ;
6). ແຜນງານ ປັບປຸງສາຍທໍ່ ທີ່ ພົວພັນກັບອ່າງເກັບນ້ຳ;
7). ແຜນງານຕິດຕັ້ງຕໍ່ທໍ່ນ້ຳປະປາ, ບໍລິການໝໍ້ແທກນ້ຳ, ປ່ຽນແທນໝໍ້ແທກນ້ຳ, ແລະ ອື່ນໆ;
8). ແຜນງານ ການຄຸ້ມຄອງ ດ້ານການເງິນ;
9). ແຜນງານ ຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

## ມາດຕາ 8: **ການສ້າງບົດລາຍງານ**

ຜູ້ໃຫ້ການບໍລິການນ້ຳປະປາຕ້ອງສ້າງບົດລາຍງານ ກ່ຽວກັບ ລະດັບການບໍລິການຜົນການປະຕິ ບັດງານໃນປັດຈຸບັນ ແລະສ້າງແຜນດຳເນີນງານ ເພື່ອ ເປັນຈຸດເຊື່ອມຕໍ່ຈາກລະດັບການບໍລິການໃນປະຈຸບັນ ໄປຫາເປົ້າໝາຍ ລະດັບການບໍລິການໃນແຕ່ລະໄລຍະ, ລວມເຖິງການກຳນົດເວລາ ແລະຄ່າໃຊ້ຈ່າຍທີ່ຈຳເປັນ ແລະ ໃຫ້ແທດເໝາະ ກັບ ສະພາບຄວາມເປັນຈິງ; ແຜນດຳເນີນງານຕ້ອງກຳນົດລະບຽບການ, ກົນໄກການບັນທຶກ ແລະການລາຍງານ ເພື່ອ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ແລະຜົນໄດ້ຮັບ.

## ມາດຕາ 9: **ການປັບປຸງແກ້ໄຂ**

ກໍລະນີທີ່ຜູ້ໃຫ້ການບໍລິການນ້ຳປະປາບໍ່ສາມາດບັນລຸໄດ້ຕາມເປົ້າໝາຍ, ຈະຕ້ອງລະບຸສິ່ງທີ່ຈະດຳເນີນການປັບປຸງແກ້ໄຂໄວ້ໃນແຜນດຳເນີນງານແລະຕ້ອງນຳສົ່ງແຜນດຳເນີນງານດັ່ງກ່າວໃຫ້ພະແນກໂຍທາທິການ ແລະ ຂົນສົ່ງແຂວງ,ນະຄອນຫຼວງ ເພື່ອ ຂໍຄຳແນະນຳ ແລະ ຫ້ອງການດັດສົມນ້ຳປະປາເພື່ອຄົ້ນຄວ້າ, ປະກອບຄຳເຫັນຕາມຄວາມເໝາະສົມ.

ໃນກໍລະນີ ທີ່ຫ້ອງການດັດສົມນ້ຳປະປາ ເຫັນດີເປັນເອກະພາບຕາມແຜນດຳເນີນງານດັ່ງກ່າວ, ຈະຕ້ອງນຳສະເໜີໃຫ້ຄະນະກຳມະການດັດສົມທຸລະກິດນ້ຳປະປາ ພິຈາລະນາຮັບຮອງເອົາ.

## ມາດຕາ 10: **ການເຜີຍແຜ່ ຂໍ້ມູນຂ່າວສານ**

ຜູ້ໃຫ້ການບໍລິການນ້ຳປະປາ ເຫັນດີນຳເອົາແຜນດຳເນີນງານ ທີ່ໄດ້ຜ່ານການ ຮັບຮອງ ແລ້ວນັ້ນປະກາດຕໍ່ສາທາລະນະ, ຕິດໄວ້ຢູ່ກະດານຂ່າວຂອງສຳນັກງານຕົນ ແລະ ສະຖານ ທີ່ສາທາລະນະ ອື່ນໆ ທີ່ເຫັນວ່າເໝາະສົມ ເພື່ອ ໃຫ້ລູກຄ້າໄດ້ຮັບຊາບ ແລະ ຕິດຕາມໄດ້.

## ມາດຕາ 11: **ການອະນຸຍາດໃຫ້ຕິດຕາມ, ກວດກາ**

ຜູ້ໃຫ້ການບໍລິການນ້ຳປະປາ ຕ້ອງຍິນຍອມປະຕິບັດຕາມແຜນການດັດສົມ ຂອງຫ້ອງ ການດັດສົມນ້ຳປະປາ, ຄະນະກຳມະການດັດສົມທຸລະກິດນ້ຳປະປາ ທຸກປະການ.

ລັດຖະມົນຕີຊ່ວຍວ່າການ,
ປະທານ ຄະນະກຳມະການດັດສົມທຸລະກິດນ້ຳປະປາ